# ສົນທິສັນຍາສາກົນວ່າດ້ວຍ

# ການຕ້ານການກໍ່ການຮ້າຍທາງນິວເຄຼຍ

ອົງການສະຫະປະຊາຊາດ

2005

**ສົນທິສັນຍາສາກົນວ່າດ້ວຍ ການຕໍ່ຕ້ານການກໍ່ການຮ້າຍທາງນິວເຄຼຍ**

*ລັດພາຄີຂອງສົນທິສັນຍາສະບັບນີ້,*

*ໂດຍຄໍານຶງເຖິງ* ວັດຖຸປະສົງ ແລະ ຫຼັກການຂອງກົດບັດສະຫະປະຊາຊາດວ່າດ້ວຍ ການຮັກສາສັນຕິພາບ ແລະ ຄວາມໝັ້ນຄົງລະຫວ່າງປະເທດ ແລະ ການສົ່ງເສີມຄວາມເປັນປະເທດບ້ານໃກ້ເຮືອນຄຽງທີ່ດີ ແລະ ສາຍພົວພັນອັນດີ ແລະ ການຮ່ວມມືລະຫວ່າງລັດຕ່າງໆ,

*ໂດຍລະນຶກເຖິງ* ຖະແຫຼງການເນື່ອງໃນໂອກາດວັນຄົບຮອບ ຫ້າສິບປີ ຂອງອົງການສະຫະປະຊາຊາດ ວັນທີ 24 ຕຸລາ 1995,

*ໂດຍຮັບຮູ້ເຖິງ* ສິດຂອງລັດທັງໝົດໃນການພັດທະນາ ແລະ ນໍາໃຊ້ພະລັງງານນິວເຄລຍເພື່ອຈຸດປະສົງສັນຕິພາບ ແລະ ຜົນປະໂຫຍດອັນຊອບທໍາຂອງເຂົາເຈົ້າ ຕໍ່ກັບຜົນປະໂຫຍດທີ່ອາດຈະໄດ້ຮັບຈາກການນໍາໃຊ້ພະລັງງານນິວເຄຼຍໂດຍສັນຕິ,

*ໂດຍຄໍານຶງເຖິງ* ສົນທິສັນຍາວ່າດ້ວຍການປົກປ້ອງ ວັດຖຸນິວເຄຼຍທາງກາຍະພາບ ປີ 1980,

*ໂດຍເປັນຫ່ວງຢ່າງເລິກເຊິ່ງ* ຕໍ່ການກະທໍາກໍ່ການຮ້າຍໃນທົ່ວໂລກທີ່ເພີ່ມທະວີຂຶ້ນໃນທຸກຮູບແບບ,

*ໂດຍລະນຶກເຖິງ* ຖະແຫຼງການກ່ຽວກັບບັນດາມາດຕະການລົບລ້າງການກໍ່ການຮ້າຍສາກົນທີ່ເຊື່ອມໂຍງເຂົ້າກັບຍັດຕິ 49/60 ວັນທີ 9/12/1994, ໃນນັ້ນ, ບັນດາປະເທດສະມາຊິກສະຫະປະຊາຊາດໄດ້ຢືນຢັນຄືນໃໝ່ ຕໍ່ກັບການກ່າວປະນາມບັນດາການກະທໍາ, ວິທີການ ແລະ ການກະທໍາການກໍ່ການຮ້າຍ ບໍ່ວ່າຈະຢູ່ບ່ອນໃດ ແລະ ໃຜເປັນຜູ້ກະທໍາ ວ່າເປັນ ອາດຊະຍາກໍາ ແລະ ໄຮ້ຄວາມຍຸຕິທໍາ ລວມທັງການກະທໍາທີ່ເປັນ ໄພອັນຕະລາຍຕໍ່ການພົວພັນມິດຕະພາບທີ່ເປັນມູນເຊື້ອລະຫວ່າງລັດ ແລະ ປະຊາຊົນ ແລະ ໄພຂົ່ມຂູ່ຕໍ່ຄວາມໝັ້ນຄົງທາງດ້ານດິນແດນ ແລະ ຄວາມໝັ້ນຄົງຂອງລັດ,

*ໂດຍໃຫ້ຂໍ້ສັງເກດວ່າ* ຖະແຫຼງການດັ່ງກ່າວໄດ້ຊຸກຍູ້ໃຫ້ບັນດາລັດພາຄີທົບທວນຄືນຢ່າງຮີບດ່ວນກ່ຽວກັບຂອບເຂດຂອງບົດບັນຍັດຂອງກົດໝາຍສາກົນທີ່ມີຢູ່ ກ່ຽວກັບ ການປ້ອງກັນ, ສະກັດກັ້ນ ແລະ ລົບລ້າງການກໍ່ການຮ້າຍ ແລະ ປະກົດການຫຍໍ້ທໍ້ ໃນທຸກຮູບແບບ ເພື່ອຮັບປະກັນໃຫ້ມີຂອບກົດໝາຍທີ່ກວມລວມໃນທຸກຂົງເຂດຕໍ່ກັບບັນຫາດັ່ງກ່າວ,

*ໂດຍລະນຶກເຖິງ* ຍັດຕິກອງປະຊຸມສະມັດຊາໃຫຍ່ຄັ້ງທີ 51/210 ລົງວັນທີ 17 ທັນວາ 1996 ແລະ ຖະແຫຼງການເພີ່ມເຕີມໃນປີ 1994 ວ່າດ້ວຍມາດຕະການລົບລ້າງລັດທິກໍ່ການຮ້າຍສາກົນ,

*ໂດຍລະນຶກເຖິງອີກວ່າ* ອີງຕາມຍັດຕິກອງປະຊຸມສະມັດຊາໃຫຍ່ຄັ້ງທີ 51/210, ຄະນະສະເພາະກິດໄດ້ຖືກສ້າງຕັ້ງຂຶ້ນ ເພື່ອຂະຫຍາຍຄວາມ ແລະ ອະທິບາຍສົນທິສັນຍາສານກົນວ່າດ້ວຍການຕໍ່ຕ້ານການກໍ່ການຮ້າຍທາງນິວເຄຼຍ ເພື່ອສົ່ງເສີມເຄື່ອງມືລະຫວ່າງປະເທດທີ່ມີຢູ່,

*ໂດຍໃຫ້ຂໍ້ສັງເກດວ່າ* ການກໍ່ການຮ້າຍທາງນິວເຄຼຍ ອາດສົ່ງຜົນສະທ້ອນຢ່າງຮ້າຍແຮງ ແລະ ອາດຈະເປັນໄພຂົ່ມຂູ່ຕໍ່ສັນຕິພາບ ແລະ ຄວາມໝັ້ນຄົງສາກົນ,

*ໂດຍໃຫ້ຂໍ້ສັງເກດວ່າອີກວ່າ* ບົດບັນຍັດທາງກົດໝາຍຫຼາຍຝ່າຍທີ່ມີຢູ່ແລ້ວ ບໍ່ໄດ້ແກ້ໄຂການໂຈມຕີເຫຼົ່ານັ້ນຢ່າງພຽງພໍ,

*ໂດຍເຊື່ອໝັ້ນ* ຕໍ່ຄວາມຈຳເປັນອັນຮີບດ່ວນໃນການເພີ່ມທະວີການຮ່ວມມືສາກົນລະຫວ່າງບັນດາລັດພາຄີໃນການວາງ ແລະ ຮອງຮັບບັນດາມາດຕະການທີ່ມີປະສິດທິພາບ ແລະ ແທດເໝາະກັບຕົວຈິງໃນການສະກັດກັ້ນການກະທຳກໍ່ການຮ້າຍ ແລະ ເພື່ອດຳເນີນຄະດີ ແລະ ລົງໂທດຜູ້ກະທຳຜິດ,

*ໂດຍຮັບຮູ້ວ່າ* ການເຄື່ອນໄຫວຂອງກອງກຳລັງທະຫານຂອງລັດແມ່ນຖືກຄຸ້ມຄອງໂດຍກົດຂອງສາກົນທີ່ຢູ່ນອກຂອບເຂດຂອງສົນທິສັນຍາສະບັບນີ້ ແລະ ການຍົກເວັ້ນການດຳເນີນການບາງຢ່າງທີ່ຢູ່ນອກເໜືອຈາກການກຳນົດຂອງສົນທິສັນຍາສະບັບນີ້ ຈະບໍ່ໄດ້ຖືເປັນຄວາມຜິດ ຫຼື ເຮັດໃຫ້ການກະທຳທີ່ຖືກຕ້ອງຕາມກົດໝາຍ ໃຫ້ກາຍເປັນການກະທຳທີ່ຜິດຕໍ່ກົດໝາຍ, ຫຼື ກີດຂວາງການດຳເນີນຄະດີຕາມກົດໝາຍອື່ນໆ,

*ໄດ້ເຫັນດີຮ່ວມກັນຄືດັ່ງນີ້:*

## ມາດຕາ 1

ເພື່ອຈຸດປະສົງຂອງສົນທິສັນຍາສະບັບນີ້:

1. "ວັດສະດຸກຳມັນຕະພາບລັງສີ" ໝາຍເຖິງ ວັດສະດຸນິວເຄຼຍ ແລະ ສານກຳມັນຕະພາບລັງສີອື່ນໆທີ່ບັນຈຸນິວຄຼາຍ (nuclides) ທີ່ມີການສະຫຼາຍຕົວເອງຕາມທຳມະຊາດ (ຂະບວນການປ່ອຍລັງສີອີອອນໜຶ່ງ ຫຼື ຫຼາຍປະເພດອອກມາ ເຊັ່ນ ລັງສີອານຟາ, ເບຕາ, ອະນຸພາກນິວຕຼອນ ແລະ ລັງສີກຼາມມາ) ແລະ ອາດເປັນສາເຫດໃຫ້ເສຍຊີວິດ, ບາດເຈັບທາງຮ່າງກາຍຢ່າງຮຸນແຮງ ຫຼື ທຳລາຍຊັບສິນ ຫຼື ສິ່ງແວດລ້ອມຢ່າງຮຸນແຮງ ເນື່ອງຈາກຄຸນສົມບັດທາງລັງສີ ຫຼື ການແຍກ (fissile) ຂອງມັນ.

2. "ວັດສະດຸນິວເຄຼຍ" ໝາຍເຖິງທາດ ປລູໂຕນ້ຽມ (plutonium) ຍົກເວັ້ນຕົວທີ່ມີຄວາມເຂັ້ມຂຸ້ນທາງໄອໂຊໂທບສູງກວ່າ 80 ເປີເຊັນໃນ plutonium-238; ຢູເຣນ້ຽມ (uranium) -233; uranium ທີ່ມີໄອໂຊໂທບ 235 ຫຼື 233 ເຂັ້ມຂຶ້ນ; uranium ທີ່ບັນຈຸໄອໂຊໂທບປະສົມປະສານກັນທີ່ເກີດຂຶ້ນເອງໃນທຳມະຊາດ ຫຼາຍກວ່າໃນຮູບແບບຂອງແຮ່ ຫຼື ເສດແຮ່; ຫຼື ວັດສະດຸໃດກໍ່ຕາມທີ່ບັນຈຸໜຶ່ງ ຫຼື ຫຼາຍກວ່າສິ່ງທີ່ໄດ້ກ່າວມາຂ້າງຕົ້ນ;

ດ້ວຍເຫດນັ້ນ "uranium ທີ່ມີໄອໂຊໂທບ 235 ຫຼື 233 ທີ່ເຂັ້ມຂຸ້ນ" ໝາຍເຖິງ uranium ທີ່ບັນຈຸໄອໂຊໂທບ 235 ຫຼື 233 ຫຼື ທັງສອງຢ່າງໃນປະລິມານທີ່ຜົນລວມຂອງອັດຕາສ່ວນຄວາມສົມບູນຂອງໄອໂຊໂທບເຫຼົ່ານີ້ ຕໍ່ກັບໄອໂຊໂທບ 238 ສູງກວ່າອັດຕາສ່ວນຂອງໄອໂຊໂທບ 235 ຕໍ່ກັບໄອໂຊໂທບ 238 ທີ່ເກີດຂຶ້ນເອງໃນທຳມະຊາດ.

3. "ສະຖານທີ່ກ່ຽວຂ້ອງກັບນິວເຄຼຍ" ໝາຍເຖິງ:

(a) ເຕົາປະຕິກອນນິວເຄຼຍ ຊຶ່ງປະກອບມີ ເຕົາປະຕິກອນທີ່ຕິດຕັ້ງໃນພາຊະນະ, ພາຫະນະ,

ເຮືອບິນຫຼື ຍານອາວະກາດ ເພື່ອນຳໃຊ້ເປັນແຫຼ່ງໃຫ້ພະລັງງານເພື່ອຂັບເຄື່ອນພາຊະນະ, ພາຫະນະ, ເຮືອບິນ ຫຼື ຍານອາວະກາດ ຫຼື ເພື່ອຈຸດປະສົງອື່ນ;

(b) ໂຮງງານ ຫຼື ເຄື່ອງຂົນສົ່ງໃດໜຶ່ງ ທີ່ຖືກນຳໃຊ້ເພື່ອການຜະລິດ, ການເກັບຮັກສາ, ການປຸງແຕ່ງ ຫຼື ການຂົນສົ່ງວັດສະດຸກຳມັນຕະພາບລັງສີ.

4. "ອຸປະກອນ" ໝາຍເຖິງ:

(a) ອຸປະກອນລະເບີດນິວເຄຼຍໃດໜຶ່ງ; ຫຼື

(b) ວັດສະດຸກະຈາຍກຳມັນຕະພາບລັງສີໃດໜຶ່ງ ຫຼື ອຸປະກອນປ່ອຍລັງສີໃດໜຶ່ງ ທີ່ອາດເປັນສາເຫດໃຫ້ເສຍຊີວິດ, ບາດເຈັບທາງຮ່າງກາຍຢ່າງຮຸນແຮງ ຫຼື ທຳລາຍຊັບສິນ ຫຼື ສິ່ງແວດລ້ອມຢ່າງຮຸນແຮງ ເນື່ອງຈາກຄຸນສົມບັດທາງການແຜ່ລັງສີຂອງມັນ.

5. “ສະຖານທີ່ຂອງລັດ ຫຼື ລັດຖະບານ” ປະກອບມີ ສະຖານທີ່ ຫຼື ພາຫະນະຂົນສົ່ງ ຊົ່ວຄາວ ຫຼື ຖາວອນທີ່ນຳໃຊ້ ຫຼື ຄອບຄອງໂດຍ ຜູ້ຕາງໜ້າຂອງລັດ, ສະມາຊິກຂອງ ລັດຖະບານ, ອົງການນິຕິບັນຍັດ ຫຼື ອົງການຕຸລາການ ຫຼື ໂດຍເຈົ້າໜ້າທີ່ ຫຼື ພະນັກງານຂອງລັດໃດໜຶ່ງ ຫຼື ເຈົ້າໜ້າທີ່ຂອງພາກລັດ ຫຼື ນິຕິບຸກຄົນໃດໜຶ່ງ ຫຼື ໂດຍພະນັກງານ ຫຼື ເຈົ້າໜ້າທີ່ຂອງອົງການສືບສວນສອບສວນ ທີ່ມີສ່ວນກ່ຽວກັບ ການປະຕິບັດໜ້າທີ່ທາງການຂອງເຂົາເຈົ້າ.

6. “ກອງກຳລັງທະຫານຂອງລັດ” ໝາຍເຖິງ ກອງກຳລັງທະຫານປະກອບອາວຸດຂອງລັດຊຶ່ງຖືກກໍ່ຕັ້ງ, ຝຶກແອບ ແລະ ປະກອບອາວຸດພາຍໃຕ້ກົດໝາຍພາຍໃນ ເພື່ອຈຸດປະສົງຫຼັກໃນການປ້ອງກັນຊາດ ຫຼື ຄວາມໝັ້ນຄົງ ແລະ ບຸກຄົນທີ່ສະໜັບສະໜູນກຳລັງປະກອບອາວຸດເຫຼົ່ານັ້ນ ທີ່ຢູ່ພາຍໃຕ້ການບັງຄັບບັນຊາ, ການຄວບຄຸມ ແລະ ຄວາມຮັບຜິດຊອບຢ່າງເປັນທາງການ.

## ມາດຕາ 2

1. ບຸກຄົນໃດໜຶ່ງທີ່ກະທຳຄວາມຜິດໃດໜຶ່ງຢ່າງຈົງໃຈ ແລະ ບໍ່ຖືກຕ້ອງຕາມກົດໝາຍ ຕາມທີ່ໄດ້ກຳ ນົດໃນສົນທິສັນຍາສະບັບນີ້:

(a) ຄອບຄອງວັດສະດຸກຳມັນຕະພາບລັງສີ ຫຼື ສ້າງ ຫຼື ຄອບຄອງອຸປະກອນກຳມັນຕະພາບລັງສີໃດໜຶ່ງ:

(i) ເພື່ອຈຸດປະສົງເພື່ອທຳຮ້າຍທາງຮ່າງກາຍຢ່າງຮຸນແຮງ ຫຼື ທຳລາຍຊີວິດ; ຫຼື

(ii) ເພື່ອຈຸດປະສົງໃນການທຳລາຍຊັບສິນ ຫຼື ສິ່ງແວດລ້ອມຢ່າງຮຸນແຮງ;

(b) ນຳໃຊ້ວັດສະດຸ ຫຼື ອຸປະກອນໃດໜຶ່ງ, ຫຼື ນຳໃຊ້ ຫຼື ທຳລາຍສະຖານທີ່ກ່ຽວຂ້ອງກັບນິວເຄຼຍ ເພື່ອຈຸດປະສົງໃນການປ່ອຍ ຫຼື ສ້າງຄວາມສ່ຽງໃຫ້ເກີດການປ່ອຍວັດສະດຸກຳມັນຕະພາບລັງສີ:

(i) ເພື່ອຈຸດປະສົງເພື່ອທຳຮ້າຍທາງຮ່າງກາຍຢ່າງຮຸນແຮງ ຫຼື ທຳລາຍຊີວິດ; ຫຼື

(ii) ເພື່ອຈຸດປະສົງໃນການທຳລາຍຊັບສິນ ຫຼື ສິ່ງແວດລ້ອມຢ່າງຮຸນແຮງ; ຫຼື

(iii) ເພື່ອຈຸດປະສົງເພື່ອບັງຄັບບຸກຄົນ ຫຼື ນິຕິບຸກຄົນ, ອົງການຈັດຕັ້ງສາກົນ ຫຼື ລັດໃດໜຶ່ງ ເພື່ອກະທຳ ຫຼື ລະເວັ້ນຈາກການກະທຳໃດໜຶ່ງ.

2. ບຸກຄົນໃດໜຶ່ງຈະຖືວ່າໄດ້ກະທຳຄວາມຜິດເຊັ່ນກັນ ຖ້າຫາກບຸກຄົນດັ່ງກ່າວ:

(a) ຂົ່ມຂູ່ທີ່ຈະກະທຳຄວາມຜິດຕາມທີ່ກຳນົດໄວ້ໃນວັກທີ 1 (*b*) ຂອງມາດຕານີ້ ພາຍໃຕ້ສະຖານະການທີ່ເຮັດໃຫ້ເຊື່ອໄດ້ວ່າຈະມີການກະທຳຕາມການຂົ່ມຂູ່ ດັ່ງກ່າວ; ຫຼື

(b) ຮຽກຮ້ອງເອົາວັດສະດຸກຳມັນຕະພາບລັງສີ, ອຸປະກອນ ຫຼື ສະຖານທີ່ກ່ຽວຂ້ອງກັບນິວເຄຼຍ

ໃດໜຶ່ງ ຢ່າງຈິງໃຈ ແລະ ບໍ່ຖືກຕ້ອງກົດໝາຍດ້ວຍການຂົ່ມຂູ່ ຫຼື ໃຊ້ກຳລັງ ພາຍໃຕ້ສະຖານະການທີ່ເຮັດໃຫ້ເຊື່ອໄດ້ວ່າຈະມີການກະທຳຕາມການຂົ່ມຂູ່ດັ່ງກ່າວ.

3. ບຸກຄົນໃດໜຶ່ງຈະຖືວ່າໄດ້ກະທຳຄວາມຜິດເຊັ່ນກັນ ຖ້າຫາກບຸກຄົນດັ່ງກ່າວພະຍາຍາມທີ່ຈະກະທຳຄວາມຜິດຕາມທີ່ກຳນົດໄວ້ໃນວັກທີ 1 ຂອງມາດຕານີ້.

4. ບຸກຄົນໃດໜຶ່ງຈະຖືວ່າໄດ້ກະທຳຄວາມຜິດເຊັ່ນກັນ ຖ້າຫາກບຸກຄົນດັ່ງກ່າວ:

(a) ມີສ່ວນຮ່ວມໃນຖານະເປັນຜູ້ສົມຮູ້ຮ່ວມຄິດໃນການກະທຳຜິດ ຕາມທີ່ໄດ້ກຳນົດໄວ້ໃນວັກທີ 1, 2 ຫຼື 3 ຂອງມາດຕານີ້; ຫຼື

(b) ກໍ່ຕັ້ງ ຫຼື ບັນຊາບຸກຄົນອື່ນເພື່ອກະທຳຄວາມຜິດຕາມທີ່ກຳນົດໄວ້ໃນວັກທີ 1, 2 ຫຼື 3 ຂອງມາດຕານີ້; ຫຼື

(c) ປະກອບສ່ວນໃນຮູບແບບໃດໜຶ່ງໂດຍກຸ່ມຄົນທີ່ມີຈຸດປະສົງທົ່ວໄປ ທີ່ຈະກະທຳໜຶ່ງ ຫຼື ຫຼາຍຄວາມຜິດ ຕາມທີ່ກຳນົດໄວ້ໃນວັກທີ 1, 2 ຫຼື 3 ຂອງມາດຕານີ້; ການປະກອບສ່ວນດັ່ງກ່າວຕ້ອງເກີດຂຶ້ນຢ່າງຈິງໃຈ ແລະ ລວມທັງດຳເນີນໄປເພື່ອຈຸດປະສົງການກະທຳຜິດ ຫຼື ເພື່ອຈຸດປະສົງຂອງກຸ່ມຄົນໃດໜຶ່ງ ຫຼື ສ້າງຂຶ້ນໂດຍຮັບຮູ້ເຖິງຄວາມຕັ້ງໃຈຂອງກຸ່ມຄົນທີ່ຕ້ອງການຈະກະທຳຜິດ ຫຼື ກະທຳການໃດໜຶ່ງທີ່ເປັນຄວາມຜິດ.

## ມາດຕາ 3

ສົນທິສັນຍາສະບັບນີ້ຈະບໍ່ຖືກນຳໃຊ້ໃນກໍລະນີທີ່ການກະທຳຜິດເກີດຂຶ້ນພາຍໃນລັດໃດລັດໜຶ່ງເທົ່ານັ້ນ, ຜູ້ກະທຳຄວາມຜິດ ແລະ ຜູ້ເຄາະຮ້າຍມີສັນຊາດຂອງລັດນັ້ນໆ, ຜູ້ກະທຳຄວາມຜິດຖືກພົບເຫັນໃນດິນແດນຂອງລັດນັ້ນໆ ແລະ ບໍ່ມີສ່ວນກ່ຽວຂ້ອງກັບລັດອື່ນໃນການນຳໃຊ້ອຳນາດຕຸລາການ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 9, ວັກທີ 1 ຫຼື 2, ຍົກເວັ້ນຕາມບົດບັນຍັດຂອງມາດຕາ 7, 12, 14, 15, 16 ແລະ 17 ແມ່ນຈະຖືກນຳໃຊ້ ຕາມຄວາມເໝາະສົມ.

## ມາດຕາ 4

1. ບໍ່ມີຫຍັງໃນສົນທິສັນຍາສະບັບນີ້ ຈະສົ່ງຜົນກະທົບຕໍ່ສິດ, ພັນທະ ແລະ ຄວາມຮັບຜິດຊອບອື່ນໆຂອງລັດ ແລະ ບຸກຄົນອື່ນພາຍໃຕ້ກົດໝາຍສາກົນ, ໂດຍສະເພາະ ຈຸດປະສົງ ແລະ ຫຼັກການຂອງກົດບັດສະຫະປະຊາຊາດ ແລະ ກົດໝາຍມະນຸດສະທຳສາກົນ.

2. ການເຄື່ອນໄຫວຂອງກຳລັງປະກອບອາວຸດໃນລະຫວ່າງການປະທະກັນ, ຊຶ່ງເງື່ອນໄຂດັ່ງກ່າວແມ່ນເຂົ້າໃຈໄດ້ພາຍໃຕ້ກົດໝາຍວ່າດ້ວຍ ມະນຸດສະທຳສາກົນ, ທີ່ຖືກຄຸ້ມຄອງໂດຍກົດໝາຍດັ່ງກ່າວ ແມ່ນຈະບໍ່

ໄດ້ຖືກຄຸ້ມຄອງໂດຍສົນທິສັນຍາສະບັບນີ້, ແລະ ການເຄື່ອນໄຫວຂອງກໍາລັງທະຫານຂອງລັດໃນການປະຕິບັດໜ້າທີ່ທາງການຂອງຕົນ ກໍ່ເຊັ່ນກັນ ແມ່ນຈະຖືກຄຸ້ມຄອງໂດຍກົດໝາຍສາກົນອື່ນແລ້ວ ແມ່ນຈະບໍ່ໄດ້ຖືກຄຸ້ມຄອງໂດຍສົນທິສັນຍານີ້.

3. ບົດບັນຍັດໃນວັກທີ 2 ຂອງມາດຕານີ້ຕ້ອງບໍ່ຖືກຕີຄວາມວ່າ ເປັນການຍິນຍອມ ຫຼື ເຮັດໃຫ້ການກະທໍາທີ່ຖືກຕ້ອງຕາມກົດໝາຍກາຍເປັນການກະທໍາທີ່ຜິດຕໍ່ກົດໝາຍ, ຫຼື ບໍ່ຖືກດໍາເນີນຄະດີຕາມກົດໝາຍອື່ນ.

4. ບໍ່ວ່າໃນທາງໃດກໍ່ຕາມ ສົນທິສັນຍາສະບັບນີ້ບໍ່ໄດ້ລະບຸ ແລະ ບໍ່ສາມາດຕີຄວາມໝາຍໄດ້ວ່າເປັນການແກ້ໄຂ ຕໍ່ກັບບັນຫາ ການນໍາໃຊ້ໃນທາງກົດໝາຍ ຫຼື ການຂົ່ມຂູ່ໃນການນໍາໃຊ້ອາວຸດນິວເຄລຍໂດຍລດຕ່າງ

## ມາດຕາ 5

ແຕ່ລະລັດພາຄີຕ້ອງຮອງຮັບມາດຕະການຕ່າງໆທີ່ອາດເຫັນວ່າຈຳເປັນ:

(a) ເພື່ອກຳນົດເປັນການກະທຳຜິດຕາມກົດໝາຍພາຍໃນຂອງຕົນ ຕາມທີ່ກຳນົດໄວ້ໃນມາດຕາ 2;

(b) ເພື່ອເຮັດໃຫ້ການກະທຳຜິດດັ່ງກ່າວຕ້ອງໄດ້ຮັບໂທດຕາມບົດລົງໂທດທີ່ເໝາະສົມໂດຍຄຳນຶງເຖິງວາມຮ້າຍແຮງຂອງການກະທຳຜິດດັ່ງກ່າວ.

## ມາດຕາ 6

ແຕ່ລະລັດພາຄີຈະຮັບຮອງເອົາມາດຕະການດັ່ງກ່າວຕາມຄວາມຈຳເປັນຕາມຄວາມເໝາະສົມ, ລວມທັງ ນິຕິກຳພາຍໃນປະເທດ ເພື່ອຮັບປະກັນວ່າການກະທຳຜິດໃນຂອບເຂດຂອງສົນທິສັນຍາສະບັບນີ້, ໂດຍສະເພາະ ເມື່ອຜູ້ກະທຳຜິດຕ້ອງການກະຕຸ້ນໃຫ້ສັງຄົມຢູ່ໃນພາວະຢ້ານກົວ ຫຼື ໃນສະເພາະກຸ່ມຄົນໃດໜຶ່ງ ຫຼື ບຸກຄົນໃດໜຶ່ງ ແມ່ນຈະບໍ່ຢູ່ພາຍໃຕ້ສະຖານະການທີ່ຖືກພິຈາລະນາໃຫ້ເປັນບັນຫາທາງການເມືອງ, ປັດຊະຍາ, ອຸດົມການ, ເຊື້ອຊາດ, ຊົນເຜົ່າ,ສາສະໜາ ຫຼື ລັກສະນະທີ່ຄ້າຍຄືກັນອື່ນໆ ແລະ ຕ້ອງໄດ້ຮັບການລົງໂທດ ຢ່າງເໝາະສົມຕໍ່ກັບຄວາມຮ້າຍແຮງຂອງຄວາມຜິດ.

## ມາດຕາ 7

1. ລັດພາຄີຕ້ອງໃຫ້ການຮ່ວມມືໂດຍ:

(a) ນຳໃຊ້ທຸກໆມາດຕະຖານທີ່ສາມາດປະຕິບັດໄດ້ ອັນປະກອບມີ ການດັດແປງໝົດໝາຍພາຍໃນຂອງຕົນ ເພື່ອປ້ອງກັນ ແລະ ຕ້ານການກະທຳຜິດໃນ ຫຼື ນອກຂອບເຂດດິນແດນຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 2, ລວມທັງມາດຕະການເກືອດຫ້າມບໍ່ໃຫ້ມີການເຄື່ອນໄຫວທີ່ຂັດກັບກົດໝາຍຂອງຄົນ, ກຸ່ມຄົນ ຫຼື ການຈັດຕັ້ງພາຍໃນດິນແດນຂອງຕົນ ທີ່ເປັນການຊຸກຍູ້, ປຸກລະດົມ, ຈັດຕັ້ງ, ສະໜອງທຶນຢ່າງຈິງໃຈ ຫຼື ໃຫ້ການຊ່ວຍເຫຼືອທາງເຕັກນິກຫຼື ຂໍ້ມູນຂ່າວສານ ຫຼື ປຸກລະດົມໃຫ້ມີການກະກຽມແກ່ການກະທຳຜິດຢ່າງຈິ່ງໃຈ;

(b) ແລກປ່ຽນຂໍ້ມູນຂ່າວສານທີ່ຖືກຕ້ອງ ແລະ ກວດສອບໄດ້ ໂດຍສອດຄ່ອງກັບກົດໝາຍພາຍໃນຂອງຕົນ ແລະ ຜ່ານຊ່ອງທາງ ແລະ ເງື່ອນໄຂທີ່ໄດ້ລະບຸໄວ້ໃນໃນສົນທິສັນຍາສະບັບນີ້, ແລະ ປະສານສົມທົບທາງດ້ານບໍລິຫານ ລວມທັງນຳໃຊ້ມາດຕະການອື່ນໆທີ່ເໝາະສົມ ເພື່ອກວດຈັບ, ປ້ອງກັນ, ຕ້ານ ແລະ ສືບສວນສອບສວນການກະທຳຜິດທີ່ກຳນົດໄວ້ໃນມາດຕາ 2 ແລະ ເພື່ອດຳເນີນຄະດີທາງອາຍາຕໍ່ກັບຜູ້ກໍ່ອາດຊະຍາກຳດັ່ງກ່າວ. ໂດຍສະເພາະ ລັດພາຄີຕ້ອງນຳໃຊ້ມາດຕະການທີ່ເໝາະສົມເພື່ອແຈ້ງໃຫ້

ລັດອື່ນໆຮັບຮູ້ໂດຍບໍ່ມີການຖ່ວງດຶງເວລາ ຕາມມາດຕາ 9 ກ່ຽວກັບການກະທຳຜິດທີ່ໄດ້ກຳນົດໄວ້ໃນມາດຕາ 2 ລວມທັງການກະກຽມທີ່ຈະກະທຳຜິດດັ່ງກ່າວ ທີ່ຕົນໄດ້ຮູ້ ພ້ອມທັງແຈ້ງໃຫ້ແກ່ອົງການຈັດຕັ້ງສາກົນອື່ນຮັບຊາບຕາມຄວາມເໝາະສົມ.

2. ລັດພາຄີຕ້ອງນຳໃຊ້ມາດຕະການທີ່ເໝາະສົມທີ່ສອດຄ່ອງກັບກົດໝາຍພາຍໃນຂອງຕົນ ເພື່ອປ້ອງກັນຄວາມລັບຂອງຂໍ້ມູນຂ່າວສານຕ່າງໆທີ່ຕົນໄດ້ຮັບຈາກລັດພາຄີອື່ນ ຜ່ານອຳນາດຂອງສົນທິສັນຍາສະບັບນີ້ ຫຼື ຜ່ານການມີສ່ວນຮ່ວມເຂົ້າໃນການເຄື່ອນໄຫວໃນການຈັດຕັ້ງປະຕິບັດສົນທິສັນຍາສະບັບນີ້. ກໍລະນີລັດພາຄີສະໜອງຂໍ້ມູນຂ່າວສານໃຫ້ແກ່ແຖງການຈັດຕັ້ງສາກົນຢ່າງເປັນຄວາມລັບ ມາດຕະການຕ່າງໆຕ້ອງໄດ້ຖືກຈັດຕັ້ງປະຕິບັດເພື່ອຮັບປະກັນວ່າ ຄວາມລັບຂອງຂໍ້ມູນດັ່ງກ່າວໄດ້ຮັບການປົກປ້ອງ.

3. ພາຍໃຕ້ສົນທິສັນຍາສະບັບນີ້ ລັດພາຄີຕ້ອງບໍ່ຖືກຮຽກຮ້ອງໃຫ້ສະໜອງຂໍຂໍ້ມູນຂ່າວສານທີ່ລັດພາຄີບໍ່ໄດ້ຮັບອະນຸຍາດໃຫ້ສະໜອງ ອີງຕາມກົດໝາຍພາຍໃນປະເທດຂອງລັດພາຄີ ຫຼື ຂໍ້ມູນຂ່າວສານທີ່ທີ່ອາດເປັນຕະລາຍຕໍ່ກັບຄວາມໝັ້ນຄົງຂອງລັດພາຄີທີ່ກ່ຽວຂ້ອງ ຫຼື ການຄຸ້ມຄອງທາງກາຍະພາບຂອງວັດສະດຸນິວເຄຼຍ.

4. ລັດພາຕີຕ້ອງແຈ້ງ ເລຂາທິການໃຫຍ່ ສປຊ ກ່ຽວກັບເຈົ້າໜ້າທີ່ທີ່ມີສິດອຳນາດ ແລະ ຈຸດປະສານງານ ເພື່ອຮັບ ແລະ ສົ່ງຂໍ້ມູນຂ່າວສານທີ່ກຳນົດໄວ້ໃນມາດຕານີ້. ເລຂາທິການໃຫຍ່ ສປຊ ຕ້ອງແຈ້ງຂໍ້ມູນກ່ຽວກັບເຈົ້າໜ້າທີ່ທີ່ມີສິດອຳນາດ ແລະ ຈຸດປະສານງານໃຫ້ແກ່ລັດພາຄີທັງໝົດ ແລະ ອົງການພະລັງງານປາລະມະນູສາກົນ. ເຈົ້າໜ້າທີ່ ແລະ ຈຸດປະສານງານດັ່ງກ່າວຕ້ອງສາມາດເຂົ້າເຖິງ ແລະ ປະສານງານໄດ້ຕະຫຼອດເວລາ.

**ມາດຕາ 8**

ເພື່ອແນໃສ່ສະກັດກັ້ນການກະທຳຜິດຕາມສົນທິສັນຍາສະບັບນີ້, ລັດພາຄີຈະພະຍາຍາມທຸກຢ່າງເພື່ອຮັບຮອງເອົາບັນດາມາດຕະການທີ່ເໝາະສົມເພື່ອຮັບປະກັນການປົກປ້ອງວັດສະດຸກຳມັນຕະພາບລັງສີ, ໂດຍຖືເອົາຄຳແນະນຳທີ່ກ່ຽວຂ້ອງ ແລະ ໜ້າທີ່ຂອງອົງການພະລັງງານປະລະມານູສາກົນ.

**ມາດຕາ 9**

1. ແຕ່ລະລັດພາຕີຕ້ອງນຳໃຊ້ມາດຕະການຕ່າງໆທີ່ເໝາະສົມເພື່ອກຳນົດຄວາມຜິດໄວ້ໃນອຳນາດຕຸລາການ ຕາມທີ່ໄດ້ກຳນົດໄວ້ໃນມາດ 2 ຄື:

(a) ການກະທຳຜິດເກີດຂຶ້ນພາຍໃນດິນແດນຂອງລັດນັ້ນໆ; ຫຼື

(b) ການກະທຳຜິດເກີດຂຶ້ນເທິງພາຫະນະທີ່ມີທຸງຊາດຂອງລັດພາຄີ ຫຼື ເຮືອບິນທີ່ຖືກຈົດທະບຽນພາຍໃຕ້ກົດໝາຍຂອງລັດພາຄີໃນເວລາທີ່ການກະທຳຜິດດັ່ງກ່າວເກີດຂຶ້ນ; ຫຼື

(c) ການກະທຳຜິດກໍ່ຂຶ້ນໂດຍຄົນສັນຊາດຂອງລັດນັ້ນໆ.

2. ລັດພາຄີອາດກຳນົດໃນອຳນາດຕຸລາການຂອງຕົນກ່ຽວກັບການກະທຳຜິດທີ່:

(a) ການກະທຳຜິດເກີດຂຶ້ນຕໍ່ກັບຄົນໃນຊາດຂອງລັດນັ້ນໆ; ຫຼື

(b) ການກະທຳຜິດເກີດຂຶ້ນຕໍ່ກັບສະຖານທີ່ຂອງລັດ ຫຼື ລັດຖະບານ ທີ່ຢູ່ຕ່າງປະເທດ ປະກອບມີ ສະຖານທູດ ຫຼື ສະຖານທີ່ທາງການທູດ ຫຼື ກົງສຸນອື່ນໆຂອງລັດນັ້ນໆ; ຫຼື

(c) ການກະທຳຜິດທີ່ກໍ່ໂດຍບຸກຄົນໄຮ້ສັນຊາດ ທີ່ມີພູມລຳເນົາຢູ່ໃນດິນແດນຂອງລັດນັ້ນໆ; ຫຼື

(d) ການກະທຳຜິດເກີດຂຶ້ນຈາກຄວາມພະຍາຍາມທີ່ຈະບັງຄັບໃຫ້ລັດນັ້ນໆກະທຳ ຫຼື ລະເວັ້ນຈາກການກະທຳໃດໜຶ່ງ; ຫຼື

(e) ການກະທຳຜິດເກີດຂຶ້ນເທິງເຮືອບິນທີ່ດຳເນີນການໂດຍລັດຖະບານຂອງລັດນັ້ນໆ.

3. ພາຍຫຼັງການໃຫ້ສັດຕະຍາບັນ, ຍອມຮັບ, ອະນຸມັດ ຫຼື ຮັບຮອງເອົາສົນທິສັນຍາສະບັບນີ້, ແຕ່ລະລັດພາຄີຈະຕ້ອງແຈ້ງໃຫ້ເລຂາທິການໃຫຍ່ອົງການສະຫະປະຊາຊາດຊາບກ່ຽວກັບຂອບເຂດອຳນາດທີ່ຕົນໄດ້ສ້າງຕັ້ງຂຶ້ນພາຍໃຕ້ກົດໝາຍແຫ່ງຊາດຕາມວັກທີ 2 ຂອງມາດຕານີ້. ຖ້າຫາກມີການປ່ຽນແປງໃດໜຶ່ງ, ລັດພາຄີທີ່ກ່ຽວຂ້ອງຕ້ອງແຈ້ງໃຫ້ທ່ານເລຂາທິການໃຫຍ່ໂດຍໄວ.

4. ແຕ່ລະລັດພາຄີຈະຕ້ອງໃຊ້ມາດຕະການດັ່ງກ່າວຕາມຄວາມຈຳເປັນ ເພື່ອກຳນົດຂອບເຂດສິດອຳນາດຂອງຕົນຕໍ່ກັບການກະທຳຜິດທີ່ໄດ້ກຳນົດໄວ້ໃນມາດຕາ 2 ໃນກໍລະນີທີ່ຜູ້ກະທຳຜິດຢູ່ໃນດິນແດນຂອງຕົນ ແລະ ບໍ່ໄດ້ສົ່ງຕົວຜູ້ຮ້າຍໄປໃຫ້ແກ່ລັດພາຄີໃດໆ ທີ່ໄດ້ສ້າງຕັ້ງສິດອຳນາດຂອງຕົນຕາມວັກ 1 ຫຼື 2 ຂອງມາດຕານີ້.

5. ສົນທິສັນຍາສະບັບນີ້ບໍ່ໄດ້ຍົກເວັ້ນການໃຊ້ອຳນາດຕັດສິນຄະດີອາຍາຂອງລັດພາຄີຕາມກົດໝາຍແຫ່ງຊາດ.

## ມາດຕາ 10

1. ເມື່ອໄດ້ຮັບຂໍ້ມູນວ່າ ການກະທຳຜິດທີ່ໄດ້ກຳນົດໄວ້ໃນມາດຕາ 2 ໄດ້ຖືກກະທຳ ຫຼື ຖືກກະທຳຢູ່ໃນຂອບເຂດດິນແດນຂອງລັດພາຄີ ຫຼືຜູ້ທີ່ໄດ້ກະທຳຜິດ ຫຼືຜູ້ທີ່ຖືກກ່າວຫາວ່າໄດ້ກະທຳຜິດນັ້ນ ອາດມີຢູ່ໃນດິນແດນຂອງຕົນ, ລັດພາຄີທີ່ກ່ຽວຂ້ອງຈະໃຊ້ມາດຕະການ ທີ່ຈຳເປັນພາຍໃຕ້ກົດໝາຍແຫ່ງຊາດຂອງຕົນໃນການສືບສວນສອບສວນຄວາມຈິງທີ່ມີຢູ່ໃນຂໍ້ມູນຂ່າວສານ.

2. ເມື່ອພໍໃຈກັບສະພາບການດັ່ງກ່າວ, ລັດພາຄີໃນດິນແດນທີ່ຜູ້ກະທຳຜິດ ຫຼື ຜູ້ຖືກກ່າວຫາຢູ່ນັ້ນ ຈະຕ້ອງໃຊ້ມາດຕະການທີ່ເໝາະສົມພາຍໃຕ້ກົດໝາຍແຫ່ງຊາດ ເພື່ອຮັບປະກັນການປະກົດຕົວຂອງຜູ້ຖືກກ່າວຫານັ້ນເພື່ອຈຸດປະສົງຂອງການດຳເນີນຄະດີ ຫຼື ການສົ່ງຜູ້ຮ້າຍຂ້າມແດນ.

3. ບຸກຄົນໃດໜຶ່ງ ຜູ້ທີ່ຖືກປະຕິບັດມາດຕະການທີ່ລະບຸໄວ້ໃນວັກທີ 2 ຂອງມາດຕານີ້ຕ້ອງ:

(a) ຕິດຕໍ່ສື່ສານໂດຍບໍ່ມີການຊັກຊ້າກັບຜູ້ຕາງຫນ້າທີ່ເໝາະສົມທີ່ໃກ້ທີ່ສຸດຂອງລັດທີ່ບຸກຄົນນັ້ນມີສັນຊາດ ຫຼື ມີສິດທິອື່ນເພື່ອປົກປ້ອງສິດທິຂອງບຸກຄົນນັ້ນ ຫຼື ລັດທີ່ບຸກຄົນດັ່ງກ່າວມີພູມລໍາເນົາຢູ່ໃນກໍລະນີທີ່ບຸກຄົນດັ່ງກ່າວເປັນຄົນບໍ່ມີສັນຊາດ;

(b) ໄດ້ຮັບການຢ້ຽມຢາມຈາກເຈົ້າໜ້າທີ່ຕາງໜ້າຂອງລັດນັ້ນໆ;

(c) ໄດ້ຮັບການແຈ້ງກ່ຽວກັບສິດຂອງບຸກຄົນດັ່ງກ່າວຕາມທີ່ໄດ້ລະບຸໄວ້ໃນວັກຍ່ອຍ (*a*) ແລະ (*b*).

4. ສິດທີ່ກ່າວໄວ້ໃນວັກທີ 3 ຂອງມາດຕານີ້ ຈະຖືກນໍາໃຊ້ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງລັດໃນອານາເຂດທີ່ຜູ້ກະທໍາຜິດ ຫຼື ຜູ້ຖືກກ່າວຫາຢູ່, ຂຶ້ນກັບຂໍ້ກໍານົດທີ່ກົດໝາຍ ແລະ ລະບຽບການດັ່ງກ່າວຕ້ອງອະນຸຍາດໃຫ້ມີຜົນບັງຄັບໃຊ້ຢ່າງເຕັມທີ່ ຕໍ່ກັບຈຸດປະສົງທີ່ກໍານົດໄວ້ໃນວັກທີ 3.

5. ຂໍ້ກໍານົດຂອງວັກທີ 3 ແລະ 4 ຂອງມາດຕານີ້ ຈະຕ້ອງບໍ່ຂັດກັບສິດຂອງລັດພາຄີໃດໜຶ່ງ ທີ່ມີການອ້າງສິດອໍານາດຕາມມາດຕາ 9, ວັກທີ 1 (*c*) ຫຼື 2 (*c*), ເພື່ອເຊື້ອເຊີນ ຄະນະກໍາມະການສາກົນຂອງອົງການກາແດງເພື່ອຕິດຕໍ່ກັບແລະໄປຢ້ຽມຢາມຜູ້ກະທໍາຜິດທີ່ຖືກກ່າວຫາ.

6. ອີງຕາມມາດຕານີ້, ເມື່ອລັດພາຄີໄດ້ຄວບຄຸມຕົວບຸກຄົນໃດໜຶ່ງແລ້ວ ຕ້ອງແຈ້ງທັນທີ, ໂດຍກົງ ຫຼື ຜ່ານເລຂາທິການໃຫຍ່ອົງການສະຫະປະຊາຊາດ, ລັດພາຄີທີ່ໄດ້ສ້າງຕັ້ງອໍານາດຕຸລາການຕາມມາດຕາ 9 ວັກທີ 1 ແລະ 2, ແລະ ໃນກໍລະນີທີ່ພິຈາລະນາວ່າສົມຄວນ ລັດພາຄີອື່ນໆທີ່ມີຄວາມສົນໃຈກ່ຽວກັບຄວາມຈິງທີ່ວ່າ ບຸກຄົນທີ່ຖືກຄວບຄຸມຕົວ ແລະ ສະຖານະການທີ່ຮັບປະກັນການກັກຂັງບຸກຄົນນັ້ນ. ລັດທີ່ດໍາເນີນການສືບສວນສອບສວນໃນວັກທີ 1 ຂອງມາດຕາສະບັບນີ້ ຈະແຈ້ງໃຫ້ລັດພາຄີຊາບໂດຍໄວກ່ຽວກັບການຄົ້ນພົບຂອງຕົນ ແລະ ຈະບອກວ່າຕົນມີເຈດຕະນາທີ່ຈະນໍາໃຊ້ສິດອໍານາດບໍລິຫານຂອງຕົນ.

## ມາດຕາ 11

1. ລັດພາຄີໃນອານາເຂດທີ່ຜູ້ກະທໍາຜິດຢູ່ນັ້ນ, ໃນກໍລະນີທີ່ມາດຕາ 9 ຖືກນໍາໃຊ້, ຖ້າບໍ່ສົ່ງຜູ້ນັ້ນ ຈະຕ້ອງຖືກຜູກມັດ ໂດຍບໍ່ມີຂໍ້ຍົກເວັ້ນ ແລະ ບໍ່ວ່າການກະທໍາຜິດດັ່ງກ່າວຈະເກີດຂຶ້ນຢູ່ໃນດິນແດນຂອງຕົນ ຫຼື ບໍ່ ຕ້ອງໄດ້ສົ່ງສໍານວນຄະດີໂດຍບໍ່ຊັກຊ້າ ຕໍ່ເຈົ້າໜ້າທີ່ທີ່ສິດອໍານາດຂອງຕົນ ເພື່ອດໍາເນີນຄະດີຕາມລະບຽບກົດໝາຍຂອງລັດນັ້ນໆ. ເຈົ້າໜ້າທີ່ເຫຼົ່ານັ້ນ ຕ້ອງຕັດສິນໃຈໃນລັກສະນະດຽວກັນກັບກໍລະນີການກະທໍາຜິດອື່ນທີ່ມີລັກສະນະຮ້າຍແຮງຕາມກົດໝາຍຂອງລັດນັ້ນໆ.

2. ເມື່ອໃດທີ່ລັດພາຄີໄດ້ຮັບອະນຸຍາດຈາກກົດໝາຍຂອງຕົນໃນການສົ່ງຕໍ່ ຫຼື ມອມຕົວບຸກຄົນສັນຊາດຂອງຕົນ ພາຍໃຕ້ເງື່ອນໄຂທີ່ຜູ້ນັ້ນຈະຖືກສົ່ງກັບຄືນສູ່ລັດນັ້ນໆ ເພື່ອຮັບໂທດຕາມຜົນຂອງການກະທໍາຜິດ ຫຼື ຂະບວນການດໍາເນີນຄະດີ ທີ່ຊຶ່ງເປັນສາເຫດໃຫ້ມີການສົ່ງຕົວ ຫຼື ມອບຕົວດັ່ງກ່າວ, ລັດທີ່ສົ່ງຕົວ

ແລະ ລັດທີ່ສະເໜີຂໍໃຫ້ມີການສົ່ງຕົວ ເຫັນດີກັບທາງເລືອກນີ້ ແລະ ຂໍ້ກຳນົດອື່ນໆທີ່ເຫັນວ່າເໝາະສົມ, ການສົ່ງຜູ້ຮ້າຍຂ້າມແດນ ຫຼື ມອບຕົວຕ້ອງມີເງື່ອນໄຂຈະພຽງພໍທີ່ຈະຍົກເລີກພັນທະທັງໝົດທີ່ກຳນົດໄວ້ໃນ ວັກທີ 1 ຂອງມາດຕານີ້.

## ມາດຕາ 12

ບຸກຄົນໃດໜຶ່ງທີ່ຖືກກັກຂັງ ຫຼື ປະຕິບັດມາດຕະການອື່ນ ຫຼື ຖືກດຳເນີນຄະດີຕາມສົນທິສັນຍາ ສະບັບນີ້ ຈະໄດ້ຮັບການຮັບປະກັນການປະຕິບັດຢ່າງຍຸຕິທຳ, ລວມທັງໄດ້ຮັບສິດທິ ແລະ ການຮັບປະກັນທັງໝົດ ຕາມກົດໝາຍຂອງລັດທີ່ຕົນຖືກກັກຂັງຕົວຢູ່ ແລະ ຕາມກົດໝາຍສາກົນ ລວມທັງກົດໝາຍສາກົນວ່າດ້ວຍສິດທິມະນຸດ.

## ມາດຕາ 13

1. ການກະທຳຜິດທີ່ໄດ້ກຳນົດໄວ້ໃນມາດຕາ 2 ຈະຖືກພິຈາລະນາເຂົ້າໃນການສົ່ງຕົວຜູ້ຮ້າຍຂ້າມແດນ ໃນສັນຍາວ່າດ້ວຍການສົ່ງຜູ້ຂ້າມແດນທີ່ມີຢູ່ແລ້ວລະຫວ່າງລັດພາຄີ ກ່ອນທີ່ຈະບັງຄັບໃຊ້ສົນທິສັນຍາ ສະບັບນີ້. ການຈັດຕັ້ງປະຕິບັດຂອງລັດພາຄີ ແມ່ນລວມເອົາ ການກະທຳຜິດທີ່ຖືເປັນການສົ່ງຜູ້ຮ້າຍຂ້າມແດນໄດ້ໃນທຸກໆສັນຍາການສົ່ງຜູ້ຂ້າມແດນ ເພື່ອທີ່ຈະໃຫ້ສາມາດຫາຂໍ້ສະຫຼຸບລະຫວ່າງກັນໄດ້ສຳເລັດ.

2. ເມື່ອລັດພາຄີໃດໜຶ່ງກຳນົດເງື່ອນໄຂໃນການສົ່ງຜູ້ຂ້າມແດນຕາມສັນຍາທີ່ຕົນມີຢູ່ ໄດ້ຮັບຄຳຮ້ອງຂໍການສົ່ງຜູ້ຮ້າຍຂ້າມແດນຈາກລັດພາຄີອື່ນ ທີ່ບໍ່ມີສັນຍາວ່າດ້ວຍການສົ່ງຜູ້ຮ້າຍຂ້າມແດນ, ລັດພາຄີທີ່ຖືກຮ້ອງຂໍອາດຈະພິຈາລະນາສົນທິສັນຍາສະບັບນີ້ເປັນພື້ນຖານທາງດ້ານກົດຫມາຍໃນການສົ່ງຜູ້ຮ້າຍຂ້າມແດນຕໍ່ກັບການກະທຳຜິດທີ່ໄດ້ກຳນົດໄວ້ໃນມາດຕາ 2. ການສົ່ງຜູ້ຮ້າຍຂ້າມແດນຕ້ອງຢູ່ພາຍໃຕ້ເງື່ອນໄຂອື່ນໆ ຕາມການກຳນົດຂອງກົດໝາຍຂອງລັດທີ່ຖືກຮ້ອງຂໍ.

3. ລັດພາຄີທີ່ບໍ່ໄດ້ກຳນົດເງື່ອນໄຂໃນການສົ່ງຜູ້ຂ້າມແດນຕາມສັນຍາທີ່ຕົນມີຢູ່ ຈະຕ້ອງຮັບຮູ້ການກະທຳຜິດທີ່ໄດ້ກຳນົດໄວ້ໃນມ າ ດ ຕ າ 2 ວ່າເປັນການກະທຳຜິດທີ່ສາມາດຮຽກຮ້ອງໃຫ້ມີການສົ່ງຕົວຜູ້ຮ້າຍຂ້າມແດນລະຫວ່າງກັນໄດ້, ໂດຍຂຶ້ນກັບເງື່ອນໄຂຂອງກົດໝາຍຂອງລັດທີ່ຖືກຮ້ອງຂໍ.

4. ສຳລັບຈຸດປະສົງຂອງການສົ່ງຜູ້ຮ້າຍຂ້າມແດນລະຫວ່າງລັດພາຄີ, ໃນກໍລະນີຈຳເປັນ ການກະທຳຜິດທີ່ໄດ້ກຳນົດໄວ້ໃນມາດຕາ 2 ຈະຖືກຈັດຕັ້ງປະຕິບັດຄືດັ່ງກັບວ່າ ຄວາມຜິດດັ່ງກ່າວໄດ້ເກີດຂຶ້ນສະເພາະແຕ່ສະຖານທີ່ທີ່ຄວາມຜິດດັ່ງກ່າວເກີດຂຶ້ນ ແຕ່ຍັງລວມທັງດິນແດນຂອງລັດທີ່ມີການກຳນົດອຳນາດຕຸລາການຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9, ວັກທີ 1 ແລະ 2 .

5. ບົດບັນຍັດຂອງສັນຍາການສົ່ງຜູ້ຮ້າຍຂ້າມແດນ ແລະ ການຈັດການທັງໝົດ ລະຫວ່າງລັດພາຄີກ່ຽວກັບການກະທຳຜິດທີ່ໄດ້ກຳນົດໄວ້ໃນມາດຕາ 2 ຈະຖືກຖືວ່າເປັນການດັດແກ້ລະຫວ່າງລັດພາຄີໃນຂອບເຂດທີ່ເຂົາເຈົ້າຫາເກີດມີການຈັດຕັ້ງປະຕິບັດທີ່ຂັດກັບສົນທິສັນຍາສະບັບນີ້.

**ມາດຕາ 14**

1. ລັດພາຄີຈະຕ້ອງໃຫ້ການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຜ່ານມາດຕະການຊ່ວຍເຫຼືອໃນລະດັບສູງທີ່ສຸດຕິດພັນກັບການສືບສວນສອບສວນ ຫຼື ການດໍາເນີນຄະດີອາຍາ ຫຼື ການສົ່ງຜູ້ຮ້າຍຂ້າມແດນເພື່ອໄປດໍາເນີນຄະດີຕໍ່ກັບການກະທໍາຜິດທີ່ໄດ້ກໍານົດໄວ້ໃນມາດຕາ 2, ລວມທັງການຊ່ວຍເຫຼືອໃນການເກັບກໍາຫຼັກຖານທີ່ຈໍາເປັນສໍາລັບການດໍາເນີນຄະດີ.

2. ລັດພາຄີຈະຕ້ອງປະຕິບັດພັນທະຂອງຕົນຕາມວັກທີ 1 ຂອງມາດຕານີ້ ໂດຍສອດຄ່ອງກັບສັນຍາ ຫຼື ຂໍ້ຕົກລົງການຊ່ວຍເຫຼືອທາງກົດໝາຍເຊິ່ງກັນ ແລະ ກັນ ທາງດ້ານກົດໝາຍອື່ນໆ ທີ່ອາດມີລະຫວ່າງກັນ. ໃນກໍລະນີທີ່ບໍ່ມີສັນຍາ ຫຼື ຂໍ້ຕົກລົງດັ່ງກ່າວ, ລັດພາຄີຈະຕ້ອງໃຫ້ການຊ່ວຍເຫຼືອເຊິ່ງກັນ ແລະ ກັນຕາມກົດໝາຍພາຍໃນຂອງຕົນ.

## ມາດຕາ 15

ເພື່ອຈຸດປະສົງຂອງການສົ່ງຜູ້ຮ້າຍຂ້າມແດນ ຫຼື ການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ ການກະທຳຜິດທີ່ກຳນົດໄວ້ໃນມາດຕາ 2 ຈະບໍ່ຖືກຖືວ່າເປັນການກະທຳຜິດທາງການເມືອງ ຫຼື ເປັນການກະທຳຜິດທີ່ກ່ຽວຂ້ອງກັບການກະທຳຜິດທາງການເມືອງ ຫຼື ເປັນການກະທຳຜິດທີ່ເກີດຈາກແຮງຈູງໃຈທາງດ້ານການເມືອງ. ດ້ວຍເຫດນັ້ນ, ການຮ້ອງຂໍໃຫ້ມີການສົ່ງຜູ້ຮ້າຍຂ້າມແດນ ຫຼື ການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ທາງດ້ານກົດໝາຍ ຕໍ່ກັບການກະທຳຜິດດັ່ງກ່າວ ອາດຈະບໍ່ຖືກປະຕິເສດບົນພື້ນຖານທີ່ວ່າ ມີຄວາມກ່ຽວຂ້ອງກັບການກະທຳຜິດທາງການເມືອງ ຫຼື ການກະທຳຜິດທີ່ເປັນການກະທຳຜິດທາງການເມືອງ ຫຼື ເປັນການກະທຳຜິດທີ່ເກີດຈາກແຮງຈູງໃຈທາງດ້ານການເມືອງ.

## ມາດຕາ 16

ສົນທິສັນຍາສະບັບນີ້ ຈະບໍ່ຕີຄວາມໝາຍ ໃຫ້ການສົ່ງຜູ້ຮ້າຍຂ້າມແດນ ຫຼື ການໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍເຊິ່ງກັນ ແລະ ກັນ ເປັນພັນທະ ຖ້າລັດພາຄີທີ່ຖືກຮ້ອງຂໍມີເຫດຜົນອັນໜັກແໜ້ນທີ່ເຊື່ອໄດ້ວ່າ ການຮ້ອງຂໍໃຫ້ສົ່ງຜູ້ຮ້າຍຂ້າມແດນສຳລັບການກະທຳຜິດທີ່ໄດ້ກຳນົດໄວ້ໃນມາດຕາ 2 ຫຼື ການຊ່ວຍເຫຼືອທາງກົດໝາຍເຊິ່ງກັນ ແລະ ກັນກ່ຽວກັບເລື່ອງດັ່ງກ່າວ ຖືກກະທຳໄປເພື່ອຈຸດປະສົງໃນການດຳເນີນຄະດີ ຫຼື ລົງໂທດບຸກຄົນນັ້ນ ໂດຍຕິດພັນກັບປະເດັນຂອງ ເຊື້ອຊາດ, ສາດສະໜາ, ສັນຊາດ, ຊົນເຜົ່າ ຫຼື ຄວາມຄິດເຫັນທາງດ້ານການເມືອງ ຫຼື ການປະຕິບັດຕາມຄຳຮ້ອງຂໍຈະເຮັດໃຫ້ເກີດຜົນສະທ້ອນຕໍ່ກັບຕຳແໜ່ງຂອງບຸກຄົນດັ່ງກ່າວ ດ້ວຍເຫດຜົນອັນໃດອັນໜຶ່ງ.

## ມາດຕາ 17

1. ບຸກຄົນທີ່ຖືກກັກຂັງ ຫຼື ຖືກຕັດສິນລົງໂທດຢູ່ໃນດິນແດນຂອງລັດພາຄີລັດໃດໜຶ່ງ ຖືກຮຽກຮ້ອງໃຫ້ໄປປະກົດຕົວຢູ່ໃນລັດພາຄີອື່ນ ເພື່ອຈຸດປະສົງຂອງການເປັນພະຍານ, ການລະບຸຕົວຕົນ ຫຼື ໃຫ້ການຊ່ວຍເຫຼືອໃນການເກັບກຳຫຼັກຖານໃນການສືບສວນສອບສວນ ຫຼື ການດຳເນີນຄະດີຕໍ່ກັບການກະທຳຜິດພາຍໃຕ້ສົນທິສັນຍາສະບັບນີ້ ຈະຖືກສົ່ງຕົວໄປໃຫ້ແກ່ລັດທີ່ຮ້ອງຂໍ ເມື່ອຄົບເງື່ອນໄຂດັ່ງຕໍ່ໄປນີ້:

(a) ບຸກຄົນດັ່ງກ່າວໃຫ້ຄວາມຍິນຍອມຕາມການຮຽກຮ້ອງຢ່າງເສລີ; ແລະ

(b) ເຈົ້າໜ້າທີ່ທີ່ມີສິດອຳນາດທັງສອງລັດຕົກລົງກັນພາຍໃຕ້ເງື່ອນໄຂທີ່ເຫັນວ່າເໝາະສົມ.

2. ຈຸດປະສົງຂອງມາດຕານີ້:

(a) ລັດທີ່ໄດ້ຮັບການສົ່ງຕົວ ຈະມີສິດອຳນາດ ແລະ ພັນທະໃນການຄວບຄຸມຜູ້ທີ່ຖືກສົ່ງຕົວ,

ເວັ້ນເສຍແຕ່ຈະໄດ້ຮັບການຮ້ອງຂໍ ຫຼື ກໍານົດຈາກລັດທີ່ສົ່ງຕົວ;

(b) ລັດທີ່ໄດ້ຮັບການສົ່ງຕົວ ຈະຕ້ອງປະຕິບັດພັນທະຂອງຕົນໃນການສົ່ງຄືນຕົວບຸກຄົນດັ່ງກ່າວໃຫ້ແກ່ລັດທີ່ສົ່ງຕົວ ຕາມທີ່ໄດ້ຕົກລົງກັນໄວ້ກ່ອນໂດຍບໍ່ມີການຫຼ້າຊ້າ, ຫຼື ຕາມການຕົກລົງອື່ນໆຂອງເຈົ້າໜ້າທີ່ທີ່ມີສິດອໍານາດຂອງທັງສອງລັດ;

(c) ລັດທີ່ໄດ້ຮັບການສົ່ງຕົວ ຈະຕ້ອງບໍ່ຮຽກຮ້ອງລັດທີ່ສົ່ງຕົວ ດໍາເນີນການໃໝ່ທັງໝົດເພື່ອທີ່ຈະນໍາຕົວບຸກຄົນດັ່ງກ່າວຄືນ;

(d) ບຸກຄົນທີ່ຖືກສົ່ງຕົວຈະໄດ້ຮັບການພາກໂທດທີ່ຕົນກໍາລັງໄດ້ຮັບຈາກລັດຜູ້ສົ່ງຕົວ ໃນເວລາທີ່ຕົນຖືກນໍາສົ່ງຕົວ ແລະ ໄດ້ໃຊ້ເວລາຢູ່ໃນລັດທີ່ຮ້ອງຂໍ.

3. ຍົກເວັ້ນກໍລະນີ ລັດພາຄີທີ່ສົ່ງຕົວ ຕາມມາດຕານີ້ຫາກຕົກລົງເຫັນດີວ່າ ບຸກຄົນດັ່ງກ່າວ ບໍ່ວ່າຈະຖືສັນຊາດໃດກໍ່ຕາມ ຈະບໍ່ຖືກດໍາເນີນຄະດີ ຫຼື ກັກຂັງ ຫຼື ຖືກຈໍາກັດສິດເສລີສ່ວນຕົວຂອງຕົນໃນອານາເຂດຂອງລັດທີ່ຮັບຕົວຂອງບຸກຄົນນັ້ນ ບໍ່ວ່າຈະເປັນໃນດ້ານການກະທໍາ ຫຼື ການຕັດສິນໂທດກ່ອນການສົ່ງຕົວໄປຈາກລັດທີ່ສົ່ງຕົວບຸກຄົນດັ່ງກ່າວ..

**ມາດຕາ 18**

1. ເມື່ອມີການຍຶດ ຫຼື ຄວບຄຸມວັດສະດຸກໍາມັນຕະພາບລັງສີ, ອຸປະກອນ ຫຼື ສະຖານທີ່ກ່ຽວຂ້ອງກັບນິວເຄຼຍ ຕາມການກະທໍາຜິດທີ່ໄດ້ລະບຸໄວ້ໃນມາດຕາ 2, ລັດພາຄີທີ່ຄອບຄອງວັດສະດຸດັ່ງກ່າວຈະຕ້ອງ:

(a) ດໍາເນີນມາດຕະການເພື່ອເຮັດໃຫ້ວັດສະດຸກໍາມັນຕະພາບລັງສີ, ອຸປະກອນ ຫຼື ສະຖານທີ່ກ່ຽວຂ້ອງກັບນິວເຄຼຍບໍ່ໄດ້ຮັບອັນຕະລາຍ;

(b) ຮັບປະກັນວ່າວັດສະດຸນິວເຄຼຍຖືກເກັບຮັກສາໄວ້ຕາມມາດຕະການຄວາມປອດໄພຂອງອົງການພະລັງງານປາລະມະນູສາກົນ; ແລະ

(c) ປະຕິບັດຄໍາແນະນໍາກ່ຽວກັບການປົກປ້ອງທາງກາຍະພາບ ແລະ ສຸຂະພາບ ແລະ ມາດຕະຖານຄວາມປອດໄພຂອງອົງການພະລັງງານປາລະມະນູສາກົນ.

2. ເມື່ອສໍາເລັດການດໍາເນີນຄະດີທີ່ກ່ຽວຂ້ອງກັບການກະທໍາຜິດທີ່ໄດ້ກໍານົດໄວ້ໃນມາດຕາ 2, ຫຼື ໃນໄລຍະເວລາທີ່ໄວກວ່ານັ້ນຕາມການຮຽກຮ້ອງຂອງກົດໝາຍສາກົນ, ວັດສະດຸກໍາມັນຕະພາບລັງສີ, ອຸປະກອນ ຫຼື ສະຖານທີ່ກ່ຽວຂ້ອງກັບນິວເຄຼຍຈະຕ້ອງຖືກສົ່ງຄືນໃຫ້ແກ່ລັດພາຄີທີ່ເປັນເຈົ້າຂອງວັດສະດຸກໍາມັນຕະພາບລັງສີ, ອຸປະກອນ ຫຼື ສະຖານທີ່ດັ່ງກ່າວຕາມສັນຊາດ ຫຼື ທີ່ຢູ່, ຫຼື ສົ່ງຄືນໃຫ້ແກ່ລັດພາຄີທີ່ວັດສະດຸດັ່ງກ່າວໄດ້ຖືກລັກ ຫຼື ໄດ້ມາຢ່າງຜິດກົດໝາຍ ພາຍຫຼັງສໍາເລັດການປຶກສາຫາລື (ໂດຍສະເພາະ ວິທີການສົ່ງຄືນ ແລະ ການເກັບຮັກສາ) ກັບລັດພາຄີທີ່ກ່ຽວຂ້ອງກັບລັດພາຄີທີ່ເປັນເຈົ້າຂອງວັດສະດຸດັ່ງກ່າວ.

3. (*a*) ເມື່ອລັດພາຄີຖືກຫ້າມໂດຍກົດໝາຍພາຍໃນ ຫຼື ກົດໝາຍສາກົນ ບໍ່ໃຫ້ສົ່ງຄືນ ຫຼື ຮັບເອົາວັດສະດຸກໍາມັນຕະພາບລັງສີ, ອຸປະກອນ ຫຼື ສະຖານທີ່ກ່ຽວຂ້ອງນິວເຄຼຍ ຫຼື ເມື່ອລັດພາຄີທີ່ກ່ຽວຂ້ອງ

ຕົກລົງເຫັນດີຕໍ່ກັບວັກທີ 3 ຂອງມາດຕານີ້, ລັດພາຄີທີ່ຄອບຄອງວັດສະດຸກຳມັນຕະພາບລັງສີ, ອຸປະກອນ ຫຼື ສະຖານທີ່ກ່ຽວຂ້ອງນິວເຄຼຍ ຕ້ອງສືບຕໍ່ນຳໃຊ້ມາດຕະການທີ່ລະບຸໄວ້ໃນວັກທີ 1 ຂອງມາດຕານີ້ ເພື່ອໃຫ້ວັດສະດຸກຳມັນຕະພາບລັງສີ, ອຸປະກອນ ຫຼື ສະຖານທີ່ກ່ຽວຂ້ອງນິວເຄຼຍໄດ້ຖືກນຳໃຊ້ເພື່ອທາງສັນຕິພາບເທົ່ານັ້ນ;

(*b*) ໃນກໍລະນີທີ່ບໍ່ມີກົດໝາຍໃຫ້ລັດພາຄີໃນຄອບຄອງວັດສະດຸກຳມັນຕະພາບລັງສີ, ອຸປະກອນ ຫຼື ສະຖານທີ່ກ່ຽວຂ້ອງນິວເຄຼຍ, ລັດດັ່ງກ່າວຕ້ອງຮັບປະກັນວ່າ ວັດສະດຸເຫຼົ່ານັ້ນຈະຖືກນຳສົ່ງໂດຍໄວທີ່ສຸດ ເພື່ອໄປຈັດເກັບໄວ້ກັບລັດພາຄີທີ່ກົດໝາຍອະນຸຍາດໃຫ້ຄອບຄອງໄດ້ ແລະ ສາມາດສະໜອງຄວາມໝັ້ນໃຈໄດ້ວ່າລັດດັ່ງກ່າວສາມາດປະຕິບັດໄດ້ຢ່າງສອດຄ່ອງຕໍ່ກັບຂໍ້ກຳນົດຂອງວັກທີ 1 ຂອງມາດຕານີ້ ໂດຍຜ່ານການປຶກສາຫາລືກັບລັດດັ່ງກ່າວ ເພື່ອຈຸດປະສົງບໍ່ເຮັດໃຫ້ວັດສະດຸເຫຼົ່ານັ້ນເປັນອັນຕະລາຍ ແລະ ວັດສະດຸກໍາມັນຕະພາບລັງສີ, ອຸປະກອນ ຫຼື ສະຖານທີ່ກ່ຽວຂ້ອງນິວເຄຼຍເຫຼົ່ານັ້ນ ຈະຖືກນຳໃຊ້ເພື່ອທາງສັນຕິພາບເທົ່ານັ້ນ.

4. ໃນກໍລະນີທີ່ ວັດສະດຸກຳມັນຕະພາບລັງສີ, ອຸປະກອນ ຫຼື ສະຖານທີ່ກ່ຽວຂ້ອງນິວເຄຼຍທີ່ອ້າງອີງໃນວັກທີ 1 ແລະ 2 ຂອງມາດຕານີ້ ບໍ່ໄດ້ຂຶ້ນກັບລັດພາຄີໃດໜຶ່ງ ຫຼື ຂອງຊາດ ຫຼື ຜູ້ຢູ່ອາໄສຂອງລັດພາຄີ ຫຼື ບໍ່ໄດ້ຖືກລັກ ຫຼື ໄດ້ມາໂດຍຜິດກົດໝາຍຈາກອານາເຂດຂອງລັດພາຄີໃດໜຶ່ງ, ຫຼື ຖ້າບໍ່ມີລັດພາຄີໃດເຕັມໃຈທີ່ຈະຮັບເອົາວັດສະດຸດັ່ງກ່າວຕາມທີ່ລະບຸໄວ້ໃນວັກທີ 3 ຂອງມາດຕານີ້, ການຕັດສິນໃຈຕ່າງຫາກຕໍ່ກັບການຈັດການວັດສະດຸດັ່ງກ່າວ ຕາມວັກທີ 3 (b) ຂອງມາດຕານີ້ ຈະຖືກຈັດຕັ້ງປະຕິບັດພາຍຫຼັງ ການປຶກສາຫາລືລະຫວ່າງລັດ ແລະ ອົງການຈັດຕັ້ງສາກົນຕ່າງໆທີ່ກ່ຽວຂ້ອງ.

5. ສຳລັບຈຸດປະສົງຂອງວັກທີ 1, 2, 3 ແລະ 4 ຂອງມາດຕານີ້, ລັດພາຄີທີ່ຄອບຄອງວັດສະດຸກຳມັນຕະພາບລັງສີ, ອຸປະກອນ ຫຼື ສະຖານທີ່ກ່ຽວຂ້ອງນິວເຄຼຍ ອາດຈະຮ້ອງຂໍການຊ່ວຍເຫຼືອ ແລະ ການຮ່ວມມືຈາກລັດພາຄີອື່ນ, ໂດຍສະເພາະລັດພາຄີ ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ເປັນຕົ້ນແມ່ນ ອົງການພະລັງງານປາລະມະນູສາກົນ. ລັດພາຄີ ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ໄດ້ຮັບການຊຸກຍູ້ໃຫ້ສະໜອງການຊ່ວຍເຫຼືອຢ່າງສູງສຸດ ຕາມທີ່ໄດ້ກຳນົດໄວ້ໃນວັກນີ້.

6. ລັດພາຄີທີ່ມີສ່ວນຮ່ວມໃນການຈັດການ ຫຼື ເກັບຮັກສາວັດສະດຸກຳມັນຕະພາບລັງສີ, ອຸປະກອນ ຫຼື ສະຖານທີ່ກ່ຽວຂ້ອງນິວເຄຼຍ ຕາມມາດຕານີ້ ຈະຕ້ອງແຈ້ງໃຫ້ຫົວໜ້າອົງການພະລັງງານປະລະມານູສາກົນຊາບກ່ຽວກັບລັກສະນະການກຳຈັດ ຫຼື ເກັບຮັກສາວັດຖຸດັ່ງກ່າວ. ຫົວໜ້າອົງການພະລັງງານປະລະມານູສາກົນ ຈະສົ່ງຂໍ້ມູນໃຫ້ລັດພາຄີອື່ນໆຮັບຊາບ.

7. ໃນກໍລະນີທີ່ມີການກະຈາຍທີ່ກ່ຽວກັບການກະທຳຜິດທີ່ໄດ້ກຳນົດໄວ້ໃນມາດຕາ 2, ມາດຕານີ້ ຈະບໍ່ສົ່ງຜົນກະທົບ ບໍ່ວ່າຈະໃນທາງໃດກໍ່ຕາມ ຕໍ່ກັບລະບຽບການຂອງກົດໝາຍສາກົນທີ່ຄຸ້ມຄອງຄວາມຮັບຜິດຊອບຕໍ່ຄວາມເສຍຫາຍດ້ານນິວເຄຼຍ, ຫຼື ລະບຽບອື່ນໆຂອງກົດໝາຍສາກົນ.

**ມາດຕາ 19**

ອີງຕາມກົດໝາຍແຫ່ງຊາດ ຫຼືຂັ້ນຕອນທີ່ກ່ຽວຂ້ອງ ລັດພາຄີທີ່ຜູ້ກະທຳຜິດຖືກດຳເນີນຄະດີ ຕ້ອງແຈ້ງຜົນສຸດທ້າຍຂອງການດຳເນີນຄະດີຕໍ່ເລຂາທິການໃຫຍ່ອົງການສະຫະປະຊາຊາດ ຊຶ່ງເປັນຜູ້ທີ່ຈະສົ່ງຂໍ້ມູນໄປຍັງລັດພາຄີອື່ນໆ.

## ມາດຕາ 20

ລັດພາຄີຈະດຳເນີນການປຶກສາຫາລືລະຫວ່າງກັນໂດຍກົງ ຫຼື ຜ່ານເລຂາທິການໃຫຍ່ຂອງສະຫະປະຊາຊາດ ພ້ອມທັງການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນຕາມຄວາມຈຳເປັນ ເພື່ອຮັບປະກັນການຈັດຕັ້ງປະຕິບັດສົນທິສັນຍາສະບັບນີ້ ຢ່າງມີປະສິດທິຜົນ..

## ມາດຕາ 21

ລັດພາຄີຈະຕ້ອງປະຕິບັດພັນທະຂອງຕົນພາຍໃຕ້ສົນທິສັນຍາສະບັບນີ້ຢ່າງສອດຄ່ອງກັບຫຼັກການຄວາມສະເໝີພາບທາງດ້ານອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງລັດ ແລະ ບໍ່ແຊກແຊງເຂົ້າໃນວຽກງານພາຍໃນຂອງລັດອື່ນ.

## ມາດຕາ 22

ສົນທິສັນຍາສະບັບນີ້ ບໍ່ອະນຸຍາດໃຫ້ລັດພາຄີໃດໜຶ່ງ ນຳໃຊ້ສິດອຳນາດ ແລະ ປະຕິບັດຫນ້າທີ່ຂອງຕົນພາຍໃນດິນແດນຂອງລັດພາຄີອື່ນ ຊຶ່ງນຳໃຊ້ສິດອຳນາດ ແລະ ປະຕິບັດຫນ້າທີ່ດັ່ງກ່າວ ແມ່ນຖືກສະຫງວນໄວ້ສະເພາະສຳລັບເຈົ້າໜ້າທີ່ຂອງລັດພາຄີນັ້ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍແຫ່ງຊາດຂອງລັດພາຄີນັ້ນໆ.

## ມາດຕາ 23

1. ຂໍ້ຂັດແຍ່ງໃດໜຶ່ງລະຫວ່າງສອງ ຫຼື ຫຼາຍລັດພາຄີ ກ່ຽວກັບການຕີຄວາມໝາຍ ຫຼື ການນຳໃຊ້ສົນທິສັນຍາສະບັບນີ້ ທີ່ບໍ່ສາມາດແກ້ໄຂໄດ້ໂດຍການເຈລະຈາພາຍໃນເວລາອັນເໝາະສົມຈະຕ້ອງຖືກຍື່ນສະເໜີຂໍການຕັດສິນຊີ້ຂາດດ້ວຍຂະບວນການອະນຸຍາໂຕຕຸລາການ. ກໍລະນີ ທີ່ຝ່າຍຕ່າງໆບໍ່ສາມາດຕົກລົງເຫັນດີກ່ຽວກັບການຕັດສິນຊີ້ຂາດໄດ້ພາຍໃນຫົກເດືອນນັບແຕ່ວັນທີຮ້ອງຂໍ, ຝ່າຍໃດຝ່າຍໜຶ່ງອາດຈະສົ່ງຂໍ້ຂັດແຍ່ງໄປໃຫ້ສານຍຸຕິທຳສາກົນ ໂດຍສະໜັກຕາມກຂໍ້ກຳນົດຂອງທຳມະນູນສານ.

2. ໃນເວລາລົງລາຍເຊັນ, ການໃຫ້ສັດຕະຍາບັນ, ການຍອມຮັບ ຫຼື ການອະນຸມັດຂອງສົນທິສັນຍາສະບັບນີ້ ຫຼື ການເຂົ້າເປັນສະມາຊິກ, ແຕ່ລະລັດພາຄີອາດຈະປະກາດວ່າ ຕົນບໍ່ຖືກຜູກມັດໂດຍວັກທີ 1

ຂອງມາດຕານີ້. ລັດພາຄີອື່ນຈະບໍ່ຖືກຜູກມັດໂດຍວັກທີ 1 ຖ້າຫາກລັດພາຄີດັ່ງກ່າວຫາກໄດ້ກຳນົດຂໍ້ສະຫງວນດັ່ງກ່າວໄວ້.

3. ລັດໃດພາຄີໃດໜຶ່ງທີ່ໄດ້ກຳນົດຂໍ້ສະຫງວນຕາມທີ່ລະບຸໄວ້ໃນວັກທີ 2 ຂອງມາດຕານີ້ ຈະສາມາດຖອດຖອນຂໍ້ສະຫງວນນັ້ນໄດ້ທຸກເວລາ ໂດຍແຈ້ງການໃຫ້ແກ່ເລຂາທິການໃຫຍ່ອົງການສະຫະປະຊາຊາດຮັບບຊາບ.

**ມາດຕາ 24**

1. ສົນທິສັນຍາສະບັບນີ້ ຈະເປີດໃຫ້ແກ່ທຸກລັດໄດ້ລົງນາມນັບແຕ່ວັນທີ 14 ກັນຍາ 2005 ເຖິງວັນທີ 31 ທັນວາ 2006 ທີ່ ສຳນັກງານໃຫຍ່ ອົງການສະຫະປະຊາຊາດ ທີ່ ນະຄອນ ນິວຢອກ.

2. ສົນທິສັນຍາສະບັບນີ້ ແມ່ນຂຶ້ນກັບການໃຫ້ສັດຕະຍາບັນ, ການຍອມຮັບຫຼືການອະນຸມັດ. ເຄື່ອງມືໃຫ້ການໃຫ້ສັດຕະຍາບັນ, ການຍອມຮັບ ຫຼື ການອະນຸມັດຈະຖືກເກັບຮັກສາໄວ້ກັບເລຂາທິການໃຫຍ່ອົງການສະຫະປະຊາຊາດ.

3. ສົນທິສັນຍາສະບັບນີ້ ຈະເປີດໃຫ້ລັດໃດໜຶ່ງເຂົ້າເປັນສະມາຊິກໄດ້. ເຄື່ອງມືຂອງການເຂົ້າເປັນສະມາຊິກຈະຖືກເກັບຮັກສາໄວ້ກັບເລຂາທິການໃຫຍ່ອົງການສະຫະປະຊາຊາດ.

**ມາດຕາ 25**

1. ສົນທິສັນຍາສະບັບນີ້ຈະມີຜົນບັງຄັບໃຊ້ໃນ 30 ວັນນັບຈາກວັນທີ່ໄດ້ມອບເຄື່ອງມືທີ່ 22 ກ່ຽວກັບການໃຫ້ສັດຕະຍາບັນ, ການຮັບຮອງ, ການອະນຸມັດ ຫຼື ການເຂົ້າເປັນສະມາຊິກຂອງ ແກ່ເລຂາທິການໃຫຍ່ອົງການສະຫະປະຊາຊາດ.

2. ສຳລັບແຕ່ລະລັດທີ່ໃຫ້ສັດຕະຍາບັນ, ຍອມຮັບ, ອະນຸມັດ ຫຼື ຮັບຮອງເອົາສົນທິສັນຍາພາຍຫຼັງທີ່ໄດ້ມອບເຄື່ອງມືທີ່ 22 ກ່ຽວກັບການໃຫ້ສັດຕະຍາບັນ, ການຮັບຮອງ, ການອະນຸມັດ ຫຼື ການເຂົ້າເປັນສະມາຊິກ, ສົນທິສັນຍາຈະມີຜົນບັງຄັບໃຊ້ໃນ 30 ວັນ ພາຍຫຼັງການໃຫ້ສັດຕະຍາບັນ, ການຮັບຮອງ, ການອະນຸມັດ ຫຼື ການເຂົ້າເປັນສະມາຊິກ.

**ມາດຕາ 26**

1. ລັດພາຄີອາດຈະສະເໜີໃຫ້ມີການດັດແກ້ສົນທິສັນຍາສະບັບນີ້. ການສະເໜີຂໍດັດແກ້ຈະຕ້ອງຍື່ນ

ໃຫ້ແກ່ຜູ້ເກັບຮັກສາ ທີ່ຈະກະຈາຍໃຫ້ບັນດາລັດພາຄີໃນທັນທີ.

2. ກໍລະນີລັດພາຄີສ່ວນໃຫຍ່ຮ້ອງຂໍໃຫ້ຜູ້ເກັບຮັກສາ ຮຽກປະຊຸມເພື່ອພິຈາລະນາການສະເໜີດັດແກ້, ຜູ້ເກັບຮັກສາຈະເຊື້ອເຊີນລັດພາຄີທັງໝົດເພື່ອເຂົ້າຮ່ວມໃນກອງປະຊຸມດັ່ງກ່າວ ຊຶ່ງຈະຖືກຈັດຂຶ້ນ 3 ເດືອນ ພາຍຫຼັງທີ່ໜັງສືເຊີນໄດ້ຖືກນຳສົ່ງອອກໄປໃຫ້ແກ່ລັດພາຄີ.

3. ກອງປະຊຸມຕ້ອງມີຄວາມພະຍາຍາມໃນການຮັບປະກັນວ່າ ການດັດແກ້ຈະຕ້ອງໄດ້ຮັບການຮັບຮອງຢ່າງເປັນເອກະສັນ. ຖ້າຫາກວ່າ ບໍ່ສາມາດຖືກຮັບຮອງຢ່າງເປັນເອກະສັນໄດ້, ການດັດແກ້ຈະໄດ້ຮັບການຮັບຮອງເອົາໂດຍສຽງສ່ວນຫຼາຍ 2/3 ຂອງລັດພາຄີທັງໝົດ. ການດັດແກ້ໃດໆທີ່ໄດ້ຮັບການຮັບຮອງຈາກກອງປະຊຸມຈະຖືກກະຈາຍໂດຍຜູ້ເກັບຮັກສາໃຫ້ແກ່ລັດພາຄີທັງໝົດຢ່າງວ່ອງໄວ.

4. ການດັດແກ້ທີ່ໄດ້ຮັບຮອງເອົາຕາມວັກທີ 3 ຂອງມາດຕານີ້ ຈະມີຜົນບັງຄັບໃຊ້ກັບແຕ່ລະລັດພາຄີທີ່ໄດ້ໃຫ້ສັດຕະຍາບັນ, ຮັບຮອງເອົາ, ເຂົ້າເປັນສະມາຊິກ ຫຼື ອະນຸມັດການດັດແກ້ພາຍໃນ 30 ວັນ ນັບຈາກວັນທີ 2/3 ຂອງລັດພາຄີ ໄດ້ໃຫ້ສັດຕະຍາຍັນ. ຫຼັງຈາກນັ້ນ, ການດັດແກ້ຈະມີຜົນບັງຄັບໃຊ້ສຳລັບລັດພາຄີພາຍ 30 ວັນ ນັບຈາກວັນທີທີ່ລັດນັ້ນໆໄດ້ໃຫ້ສັດຕະຍາບັນ.

### ມາດຕາ 27

1. ລັດພາຄີໃດໜຶ່ງສາມາດຖອນຕົວຈາກສົນທິສັນຍາສະບັບນີ້ໂດຍການແຈ້ງເປັນລາຍລັກອັກສອນຕໍ່ເລຂາທິການໃຫຍ່ອົງການສະຫະປະຊາຊາດ.

2. ການຖອນຕົວຈາກສົນທິສັນຍາສະບັບນີ້ ຈະມີຜົນພາຍຫຼັງ 1 ປີ ນັບແຕ່ວັນທີເລຂາທິການໃຫຍ່ອົງການສະຫະຊາຊາດໄດ້ຮັບໜັງສືແຈ້ງທາງການ.

### ມາດຕາ 28

ຕົ້ນສະບັບຂອງສົນທິສັນຍາສະບັບນີ້ ຊຶ່ງເປັນພາສາ ອາຫຼັບ, ຈີນ, ອັງກິດ, ຝລັ່ງ, ຣັດເຊຍ ແລະ ແອັດສະປາຍໂຍນ ແມ່ນມີຄ່າແທ້ຈິງເທົ່າທຽມກັນ ຊຶ່ງຈະຖືກເກັບຮັກສາໄວ້ໂດຍ ເລຂາທິການໃຫຍ່ອົງການສະຫະປະຊາຊາດ ທີ່ຈະສຳເນົາໃຫ້ແກ່ລັດທັງໝົດ.

ເພື່ອເປັນສັກຂີພະຍານໃນຄັ້ງນີ້, ຜູ້ລົງນາມທີ່ຢູ່ລຸ່ມຕໍ່ໄປນີ້ ແມ່ນໄດ້ຮັບອະນຸຍາດຢ່າງຖືກຕ້ອງຈາກລັດຖະບານຂອງຕົນ ເພື່ອໄດ້ລົງນາມໃນສົນທິສັນຍາສະບັບນີ້ ຊຶ່ງໄດ້ເປີດໃຫ້ລົງນາມຢູ່ສຳນັກງານໃຫຍ່ອົງການສະຫະປະຊາຊາດ ທີ່ ນະຄອນນິວຢອກ ໃນວັນທີ 14 ກັນຍາ 2005.